ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ:...134....../ລບ.

ນະຄອນຫລວງວຽງຈັນ, ວັນທີ...13.5.2015

# ດຳລັດ

# ວ່າດ້ວຍປ່າສະຫງວນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງໃໝ່ ສະບັບເລກທີ 02/ ສພຊ, ລົງວັນທີ 06 ພຶດສະພາ 2003 ;
- ອີງຕາມກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມໜັງສືສະເໜີ ຂອງກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ສະບັບເລກທີ 8496./ກຊສ, ລົງວັນທີ 29 ທັນວາ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການຈັດສັນຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ, ການນຳໃຊ້ ແລະກວດກາປ່າສະຫງວນ ເພື່ອເຮັດໃຫ້ປ່າສະຫງວນມີຄວາມອຸດົມສົມບູນ ແລະ ຍືນຍົງ ແນໃສ່ປົກປັກຮັກສາສິ່ງແວດລ້ອມ, ຮັກສາແຫລ່ງນ້ຳ, ປ້ອງກັນການເຊາະເຈື່ອນ, ຮັກສາຄຸນນະພາບຂອງດິນ, ຮັກສາເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການປັບຕົວ ແລະຫລຸດຜ່ອນການປ່ຽນແປງດິນຟ້າອາກາດ ແລະ ແກ້ໄຂສະພາວະໂລກຮ້ອນ, ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

### ມາດຕາ 2. ປ່າສະຫງວນ

ປ່າສະຫງວນ ແມ່ນປ່າໄມ້ ແລະທີ່ດິນປ່າໄມ້ ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ ໃນການອະນຸລັກ, ປົກປັກຮັກສາ ພັນພືດ, ພັນສັດ, ລະບົບນິເວດປ່າໄມ້ ແລະ ສິ່ງທີ່ມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະການຄົ້ນຄວ້າທາງດ້ານວິທະຍາສາດ.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທີ່ດິນປ່າສະຫງວນ** ໝາຍເຖິງ ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫລືບໍ່ມີປ່າໄມ້ປົກຫຸ້ມຢູ່ ລວມທັງສາຍນ້ຳ, ຫ້ວຍ, ຮ່ອງ, ຄອງ, ບຶງ, ໜອງນ້ຳ, ທີ່ດິນບໍລິເວນນ້ຳ ແລະ ອື່ນໆ ທີ່ລັດໄດ້ກຳນົດໃຫ້ເປັນທີ່ດິນປ່າສະຫງວນ;
2. **ລະດັບປ່າສະຫງວນ** ໝາຍເຖິງ ການຈັດແບ່ງປ່າສະຫງວນອອກເປັນລະດັບ ເຊັ່ນ: ປ່າສະຫງວນແຫ່ງຊາດ, ປ່າສະຫງວນລະດັບແຂວງ, ເມືອງ ແລະ ບ້ານ ເພື່ອການຄຸ້ມຄອງ;
3. **ການພັດທະນາປ່າສະຫງວນ** ໝາຍເຖິງ ທຸກການເຄື່ອນໄຫວ ຢູ່ໃນຂອບເຂດປ່າສະຫງວນ ເພື່ອຟື້ນຟູບູລະນະປ່າໄມ້ ແລະທີ່ດິນປ່າໄມ້ ລວມທັງຊີວະນາໆພັນຕາມທຳມະຊາດ ແລະ ດ້ວຍການນຳໃຊ້ເຕັກນິກວິທະຍາສາດ ແນໃສ່ອະນຸລັກສິ່ງແວດລ້ອມ, ລະບົບນິເວດ, ພັນພືດ, ພັນສັດນ້ຳ ແລະສັດປ່າ, ວັດທະນະທຳ, ປະຫວັດສາດ ແລະ ສິ່ງທີ່ມີຄຸນຄ່າ ຢູ່ໃນຂອບເຂດທີ່ດິນ ປ່າສະຫງວນ;
4. **ປ່າສະຫງວນມໍລະດົກໂລກ** ໝາຍເຖິງ ປ່າສະຫງວນທີ່ມີລັກສະນະສະເພາະ ທາງດ້ານທຳມະຊາດ, ປະຫວັດສາດ ແລະວັດທະນະທຳ ທີ່ໂດດເດັ່ນ ຕາມມາດຕະຖານໃນລະດັບໂລກ;
5. **ປ່າສະຫງວນມໍລະດົກອາຊຽນ** ໝາຍເຖິງ ປ່າສະຫງວນ ທີ່ມີລັກສະນະສະເພາະ ທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳທີ່ໂດດເດັ່ນ ຕາມມາດຕະຖານໃນລະດັບອາຊຽນ;
6. **ການແບ່ງເຂດຄຸ້ມຄອງ** ໝາຍເຖິງ ການກຳນົດ ຫລືແບ່ງເຂດທີ່ດິນປ່າສະຫງວນ ເປັນແຕ່ລະເຂດຕາມຈຸດປະສົງ ຂອງການຈັດສັນ, ຄຸ້ມຄອງ ແລະ ນຳໃຊ້;
7. **ລະບົບນິເວດ** ໝາຍເຖິງ ສາຍພົວພັນ ລະຫວ່າງສິ່ງທີ່ມີຊີວິດ ແລະສິ່ງບໍ່ມີຊີວິດທີ່ຄົງຕົວຢູ່ຕາມທຳມະຊາດ;
8. **ຊັບພະຍາກອນປ່າໄມ້** ໝາຍເຖິງ ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງປະກອບດ້ວຍ ດິນ, ພືດພັນ, ຕົ້ນໄມ້, ນ້ຳ, ສັດນ້ຳ, ສັດປ່າ ແລະອື່ນໆ ທີ່ມີທັງໝົດ ຢູ່ໃນເຂດທີ່ດິນປ່າໄມ້;
9. **ຊີວະນາໆພັນ** ໝາຍເຖິງ ຄວາມຫລາກຫລາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງ ທີ່ມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;
10. **ເຄື່ອງປ່າຂອງດົງ** ໝາຍເຖິງ ທຸກສິ່ງ ທີ່ເປັນຜະລິດຕະພັນຂອງປ່າໄມ້ ນອກຈາກໄມ້ທ່ອນ ເຊັ່ນ: ປະເພດ ນ້ຳມັນ, ຢາງ, ໃບ, ດອກ, ເປືອກ, ໝາກ, ຮາກ, ເຄືອ, ຫົວ, ເຫັດ, ກາຝາກ ທຸກຊະນິດ ແລະອື່ນໆ ທີ່ມີທັງໝົດ ຢູ່ໃນເຂດທີ່ດິນປ່າໄມ້;
11. **ແຫລ່ງນ້ຳ** ໝາຍເຖິງບໍ່ນ້ຳ, ສະຖານທີ່ບ່ອນທີ່ມີການເຕົ້າໂຮມ, ພັກຕົວ ຫລືເຄື່ອນໄຫລ ແບບຖາວອນ ຫລືຊົ່ວຄາວ ຂອງນ້ຳທຳມະຊາດ ທີ່ມີຢູ່ເທິງໜ້າດິນ, ໃຕ້ດິນ ແລະ ໃນອາກາດ;
12. **ວັງສະຫງວນ** ໝາຍເຖິງ ບາງຕອນຂອງລຳເຊ, ລຳຫ້ວຍ, ແມ່ນ້ຳ ແລະ ໜອງນ້ຳທຳມະຊາດ ທີ່ຖືກກຳນົດຈາກປະຊາຊົນ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອປົກປັກຮັກສາຖິ່ນຢູ່ອາໃສ ແລະຂະຫຍາຍພັນ ຂອງສັດນ້ຳ ແລະ ການຊົມໃຊ້ຊັບພະຍາກອນສັດນ້ຳ ຢູ່ໃນເຂດດັ່ງກ່າວ ຕ້ອງປະຕິບັດຕາມລະບຽບການ ທີ່ກ່ຽວຂ້ອງ;

13. ແຫລ່ງທ່ອງທ່ຽວທຳມະຊາດ ໝາຍເຖິງ ພື້ນທີ່ທີ່ມີທັດສະນີຍະພາບທາງດ້ານທຳມະຊາດ ເຊັ່ນ: ຜາຫີນ, ດານຫີນ, ຖ້ຳ, ພູພຽງ, ພູສູງ, ພູໄຟ, ທົ່ງພຽງ, ປ່າໄມ້, ແມ່ນ້ຳ, ໜອງ, ບຶງ, ນ້ຳຕົກ ຕາດ, ແກ້ງ, ບໍ່ນ້ຳຮ້ອນ, ດອນ, ຫາດຊາຍ, ປະກົດການທາງທຳມະຊາດ ແລະອື່ນໆ.
14. ການນຳໃຊ້ປ່າສະຫງວນ ໝາຍເຖິງ ການນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ສິ່ງຕ່າງໆ ໃນເຂດປ່າສະຫງວນ ຕາມລະບຽບກົດໝາຍ.

ມາດຕາ 4. ຂອບເຂດການນຳໃຊ້

ດຳລັດສະບັບນີ້ນຳໃຊ້ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ຄຸ້ມຄອງ ແລະ ນຳໃຊ້ປ່າສະຫງວນ.

## ໝວດທີ 2
## ລະດັບ, ປະເພດ ແລະເຂດປ່າສະຫງວນ

ມາດຕາ 5. ລະດັບປ່າສະຫງວນ

ປ່າສະຫງວນຢູ່ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຈັດເປັນ ສີ່ ລະດັບ ດັ່ງນີ້:

1. ປ່າສະຫງວນແຫ່ງຊາດ;
2. ປ່າສະຫງວນ ລະດັບແຂວງ, ນະຄອນ;
3. ປ່າສະຫງວນ ລະດັບເມືອງ, ເທດສະບານ;
4. ປ່າສະຫງວນ ລະດັບບ້ານ.

ມາດຕາ 6. ເງື່ອນໄຂການຈັດລະດັບປ່າສະຫງວນ

ປ່າສະຫງວນແຕ່ລະລະດັບ ໄດ້ຈັດຕາມເງື່ອນໄຂ ດັ່ງນີ້:

1. ປ່າສະຫງວນແຫ່ງຊາດ:
   - ເນື້ອທີ່ ຫ້າສິບພັນ ເຮັກຕາ ຂຶ້ນໄປ;
   - ມີປ່າໄມ້ທຳມະຊາດດັ້ງເດີມ ທີ່ອຸດົມສົມບູນ;
   - ມີຄວາມຫລາກຫລາຍທາງດ້ານຊີວະນາໆພັນ ເຊັ່ນ: ຊະນິດພັນພືດ, ສັດນ້ຳ ແລະ ສັດປ່າ ທີ່ມີຄຸນຄ່າ, ຫາຍາກ ແລະ ໃກ້ຈະສູນພັນ;
   - ມີລັກສະນະພູມສັນຖານໂດດເດັ່ນ, ມີຄວາມສຳຄັນດ້ານປະຫວັດສາດ, ວັດທະນະທຳ ແລະ ສິ່ງແວດລ້ອມ;
2. ປ່າສະຫງວນລະດັບແຂວງ:
   - ເນື້ອທີ່ ຫ້າສິບພັນ ເຮັກຕາ ລົງມາ ຫາ ຫ້າພັນ ເຮັກຕາ;
   - ມີຄວາມຫລາກຫລາຍທາງດ້ານຊີວະນາໆພັນ ເຊັ່ນ: ຊະນິດພັນພືດ, ສັດນ້ຳ ແລະ ສັດປ່າ ທີ່ມີຄຸນຄ່າ, ຫາຍາກ ແລະໃກ້ຈະສູນພັນ;

- ມີລັກສະນະພູມສັນຖານທີ່ໂດດເດັ່ນ, ມີຄວາມສຳຄັນດ້ານ ປະຫວັດສາດ, ວັດທະນະທຳ ແລະ ສິ່ງແວດລ້ອມ;

3. ປ່າສະຫງວນລະດັບເມືອງ:
   - ເນື້ອທີ່ ຫ້າພັນ ເຮັກຕາ ລົງມາ ຫາ ໜຶ່ງຮ້ອຍ ເຮັກຕາ;
   - ມີຄວາມຫລາກຫລາຍທາງດ້ານຊີວະນາໆພັນ ເຊັ່ນ: ຊະນິດພັນ ພືດ, ສັດນ້ຳ ແລະ ສັດປ່າ ທີ່ມີຄຸນຄ່າ, ຫາຍາກ ແລະ ໃກ້ຈະສູນພັນ;
   - ມີລັກສະນະພູມສັນຖານທີ່ໂດດເດັ່ນ, ມີຄວາມສຳຄັນດ້ານປະຫວັດສາດ, ວັດທະນະທຳ ແລະ ສິ່ງແວດລ້ອມ;
4. ປ່າສະຫງວນລະດັບບ້ານ:
   - ເນື້ອທີ່ ໜຶ່ງຮ້ອຍ ເຮັກຕາ ລົງມາ;
   - ມີລັກສະນະພູມສັນຖານທີ່ໂດດເດັ່ນ, ມີຄວາມສຳຄັນດ້ານປະຫວັດສາດ, ວັດທະນະທຳຮີດຄອງປະເພນີ ແລະສິ່ງແວດລ້ອມ;

ມາດຕາ 7. ປະເພດປ່າສະຫງວນ

ປ່າສະຫງວນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈັດເປັນ ປະເພດ ດັ່ງນີ້:

1. **ປ່າສະຫງວນທີ່ເປັນອຸທິຍານແຫ່ງຊາດ** ແມ່ນປ່າສະຫງວນ ທີ່ມີຄຸນລັກສະນະສະເພາະ ແລະ ມີຄວາມຫຼາກຫຼາຍທາງລະບົບນິເວດທຳມະຊາດ ທີ່ໂດດເດັ່ນມີຄຸນຄ່າແກ່ການສຶກສາຄົ້ນຄວ້າທາງວິທະຍາສາດ, ທ່ອງທ່ຽວ, ປົກປັກຮັກສາສິ່ງແວດລ້ອມ ແລະ ວັດທະນະທຳ;
2. **ປ່າສະຫງວນທີ່ເປັນມໍລະດົກທາງທຳມະຊາດ** ແມ່ນປ່າສະຫງວນ ທີ່ມີລັກສະນະສະເພາະ ທາງທຳມະຊາດທີ່ໂດດເດັ່ນໃນລະດັບຊາດ, ພາກພື້ນ ແລະ ໃນລະດັບໂລກ;
3. **ປ່າສະຫງວນທາງປະຫວັດສາດ ແລະ ວັດທະນະທຳ** ແມ່ນປ່າສະຫງວນ ທີ່ມີປະຫວັດຄວາມເປັນມາຍາວນານ ທາງດ້ານປະຫວັດສາດ ແລະ ວັດທະນະທຳຂອງຊາດ ທີ່ໂດດເດັ່ນ;
4. **ປ່າສະຫງວນທີ່ເປັນເຂດອະນຸລັກພັນພືດ, ພັນສັດນ້ຳ ແລະ ສັດປ່າ** ແມ່ນປ່າສະຫງວນ ທີ່ຍັງມີຊະນິດພັນພືດ, ສັດນ້ຳ ແລະ ສັດປ່າ ສະເພາະຖິ່ນທີ່ຫາຍາກ ແລະ ໃກ້ຈະສູນພັນ;
5. **ປ່າສະຫງວນ ຄຸ້ມຄອງການນຳໃຊ້ຊັບພະຍາກອນ** ແມ່ນປ່າສະຫງວນທີ່ມີຄວາມອຸດົມສົມບູນທາງທຳມະຊາດ ຊຶ່ງເປັນເຂດທີ່ໄດ້ມີການຄຸ້ມຄອງປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແບບຍືນຍົງ;

ມາດຕາ 8. ການຈັດແບ່ງເຂດໃນປ່າສະຫງວນ

ປ່າສະຫງວນແຕ່ລະລະດັບ, ປະເພດ ໄດ້ຈັດແບ່ງອອກເປັນເຂດ ດັ່ງນີ້:

1. ເຂດຫວງຫ້າມເດັດຂາດ ແມ່ນເຂດປ່າໄມ້ ຊຶ່ງເປັນບ່ອນອາໃສ, ຫາກິນ ແລະ ຂະຫຍາຍພັນ ຕົ້ນຕໍຂອງສັດ ແລະ ເປັນບ່ອນທີ່ມີພັນພືດຫຼາກຫຼາຍ ແລະ ດົກໜາ. ເຂດນີ້ ບໍ່ອະນຸຍາດ ໃຫ້ດຳເນີນກິດ

ຈະການປ່າໄມ້, ເກັບກູ້ຜະລິດຕະພົນປ່າໄມ້ ລວມທັງການເຂົ້າໄປໃນເຂດດັ່ງກ່າວ ເວັ້ນເສັຍແຕ່ກໍລະນີ ທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍປ່າໄມ້;

2. **ເຂດຄຸ້ມຄອງການນຳໃຊ້** ແມ່ນເຂດປ່າໄມ້ ທີ່ຢູ່ຕິດຈອດ ຫຼືໃກ້ຄຽງກັບເຂດຫວງຫ້າມເດັດຂາດ. ເຂດນີ້ ຕ້ອງໄດ້ປົກປັກຮັກສາຄືກັນກັບເຂດຫວງຫ້າມເດັດຂາດ ແຕ່ອະນຸຍາດ ໃຫ້ປະຊາຊົນນຳໃຊ້ໄມ້ ແລະ ຜະລິດຕະພົນປ່າໄມ້ຕາມລະບຽບການ ແລະ ແຜນຈັດສັນ;
3. **ເຂດເຊື່ອມຕໍ່** ແມ່ນເຂດປ່າໄມ້ ທີ່ເຊື່ອມຕໍ່ ລະຫວ່າງປ່າສະຫງວນດ້ວຍກັນ ຫລືລະຫວ່າງ ປ່າສະຫງວນ ແລະ ປ່າປະເພດອື່ນ ຊຶ່ງກຳນົດເພື່ອປົກປັກຮັກສາທາງທ່ຽວ ແລະ ຫາກິນ ຂອງສັດປ່າ. ເຂດນີ້ ບໍ່ອະນຸຍາດໃຫ້ ຕັດຕົ້ນໄມ້, ດຳເນີນກິດຈະການປ່າໄມ້ ຫລືກິດຈະການອື່ນ ທີ່ເປັນການກີດຂວາງ ຫລືທຳລາຍທາງທ່ຽວຂອງສັດ;
4. **ເຂດກັນຊົນ** ແມ່ນເຂດປ່າໄມ້, ແຫຼ່ງນ້ຳ ຫລືທີ່ດິນປະເພດອື່ນໆ ຢູ່ອ້ອມຮອບປ່າສະຫງວນ ໃນລັດສະໝີແຕ່ ໜຶ່ງຮ້ອຍ ຫາ ຫ້າຮ້ອຍ ແມັດ ທີ່ກຳນົດ ແລະຈັດສັນໄວ້ເພື່ອປ້ອງກັນການບຸກລຸກທຳລາຍປ່າສະຫງວນ;

## ໝວດທີ 3
## ການກຳນົດ ແລະການຂຶ້ນທະບຽນປ່າສະຫງວນ

### ມາດຕາ 9. ການກຳນົດປ່າສະຫງວນ

ການກຳນົດເອົາປ່າໄມ້ ແລະ ທີ່ດິນປ່າໄມ້ໃດໜຶ່ງເປັນປ່າສະຫງວນ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ດຳເນີນການສຳຫຼວດ, ເກັບກຳຂໍ້ມູນກ່ຽວກັບຄຸນລັກສະນະຂອງພື້ນທີ່, ຄວາມຫລາກຫລາຍທາງດ້ານຊີວະນາໆພັນ ແລະ ເສດຖະກິດ-ສັງຄົມຂອງໝູ່ບ້ານທີ່ຢູ່ໃນ ແລະ ອ້ອມຂ້າງເຂດທີ່ຈະກຳນົດ ເປັນປ່າສະຫງວນ;
2. ສ້າງແຜນທີ່ ສະແດງຂອບເຂດ ທີ່ຕັ້ງ ແລະສະພາບປ່າໄມ້;
3. ສະເໜີອົງການທີ່ມີສິດອຳນາດ ຕາມທີ່ໄດ້ກຳນົດໃນມາດຕາ 12 ຂອງດຳລັດສະບັບນີ້ ພິຈາລະນາຮັບຮອງ;
4. ຂຶ້ນທະບຽນປ່າສະຫງວນ.

### ມາດຕາ 10. ການຂະຫຍາຍເນື້ອທີ່ປ່າສະຫງວນ

ການຂະຫຍາຍເນື້ອທີ່ປ່າສະຫງວນ ແມ່ນການເພີ່ມເຂດປ່າໄມ້, ທີ່ດິນປ່າໄມ້ ຫລືທີ່ດິນປະເພດ ອື່ນທີ່ມີພື້ນທີ່ເຊື່ອມຕໍ່ກັບເຂດປ່າສະຫງວນ ຊຶ່ງມີຄວາມສຳຄັນ ທາງດ້ານປະຫວັດສາດ, ວັດທະນະທຳ, ສິ່ງແວດລ້ອມ, ການອະນຸລັກປົກປັກຮັກສາລະບົບນິເວດທຳມະຊາດ, ດິນ, ນ້ຳ, ຊີວະນາໆພັນ ແລະສັດນ້ຳ, ສັດປ່າເຂົ້າເປັນປ່າສະຫງວນ. ການຂະຫຍາຍເນື້ອທີ່ປ່າສະຫງວນ ໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ ກຳນົດໄວ້ໃນມາດຕາ 9 ຂອງດຳລັດສະບັບນີ້.

ມາດຕາ 11. ການຍົກລະດັບປ່າສະຫງວນ

ປ່າສະຫງວນໃດໜຶ່ງ ທີ່ໄດ້ຂະຫຍາຍເນື້ອທີ່ ແລະມີເງື່ອນໄຂດ້ານຂອບເຂດ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 6 ຂອງດຳລັດສະບັບນີ້ ຕ້ອງໄດ້ຍົກລະດັບ ຂັ້ນຄຸ້ມຄອງ ຈາກປ່າສະຫງວນລະດັບໜຶ່ງ ຂຶ້ນເປັນ ປ່າສະຫງວນລະດັບຂັ້ນສູງກວ່າ.

ສຳລັບປ່າສະຫງວນໃດໜຶ່ງ ທີ່ມີເງື່ອນໄຂ ຍົກເປັນປ່າສະຫງວນມໍລະດົກ ດ້ານໃດໜຶ່ງ ໃນລະດັບພາກພື້ນ ຫລືລະດັບໂລກ ຕາມເງື່ອນໄຂ ແລະ ມາດຕະຖານຂອງອົງການທີ່ກ່ຽວຂ້ອງແລ້ວ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສະເໜີໃຫ້ລັດຖະບານພິຈາລະນາ ເພື່ອສະເໜີຕໍ່ອົງການທີ່ກ່ຽວຂ້ອງຮັບຮອງເປັນປ່າສະຫງວນ ລະດັບພາກພື້ນ ຫລືລະດັບໂລກ.

ມາດຕາ 12. ການຮັບຮອງປ່າສະຫງວນ

ການຮັບຮອງປ່າສະຫງວນ ໃຫ້ປະຕິບັດ ດັ່ງນີ້:

1. ປ່າສະຫງວນແຫ່ງຊາດ ທີ່ມີເນື້ອທີ່ ກວມເອົາຫລາຍແຂວງ, ສະພາແຫ່ງຊາດ ເປັນຜູ້ຮັບຮອງ ຕາມການສະເໜີ ຂອງລັດຖະບານ;
2. ສຳລັບປ່າສະຫງວນແຫ່ງຊາດ ທີ່ບໍ່ກວມເອົາຫລາຍແຂວງ ແລະ ປ່າສະຫງວນລະດັບແຂວງ ທີ່ມີເນື້ອທີ່ກວມເອົາຫລາຍເມືອງ ແມ່ນລັດຖະບານເປັນຜູ້ຮັບຮອງ ຕາມການສະເໜີ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບົນພື້ນຖານການເຫັນດີ ຈາກເຈົ້າແຂວງທີ່ກ່ຽວຂ້ອງ;
3. ປ່າສະຫງວນລະດັບແຂວງ ທີ່ບໍ່ກວມເອົາຫຼາຍເມືອງ ແລະ ປ່າສະຫງວນລະດັບເມືອງ ທີ່ມີເນື້ອ ທີ່ກວມເອົາຫລາຍເມືອງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ຮັບຮອງ ຕາມການສະເໜີ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນ ບົນພື້ນຖານການເຫັນດີຈາກເຈົ້າເມືອງທີ່ກ່ຽວຂ້ອງ;
4. ປ່າສະຫງວນລະດັບເມືອງ ທີ່ບໍ່ກວມເອົາຫຼາຍເມືອງ ແລະ ປ່າສະຫງວນລະດັບບ້ານ ທີ່ມີເນື້ອທີ່ກວມເອົາຫລາຍບ້ານ ແມ່ນເຈົ້າເມືອງເປັນຜູ້ຮັບຮອງ ຕາມການສະເໜີຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ບົນພື້ນຖານການເຫັນດີ ຈາກນາຍບ້ານທີ່ກ່ຽວຂ້ອງ;
5. ປ່າສະຫງວນລະດັບບ້ານ ທີ່ບໍ່ກວມເອົາຫລາຍບ້ານ ແມ່ນນາຍບ້ານເປັນຜູ້ຮັບຮອງຕາມ ການສະເໜີຂອງໜ່ວຍງານປ່າໄມ້ບ້ານ.

ມາດຕາ 13. ການຂຶ້ນທະບຽນປ່າສະຫງວນ

ການຂຶ້ນທະບຽນປ່າສະຫງວນ ແມ່ນການຂຶ້ນບັນຊີ ແລະ ອອກໃບຢັ້ງຢືນທີ່ດິນປ່າສະຫງວນຢ່າງຖືກຕ້ອງຕາມກົດໝາຍໃຫ້ແກ່ອົງການຄຸ້ມຄອງປ່າສະຫງວນ. ເພື່ອສະດວກໃນການຄຸ້ມຄອງ ແລະ ປົກປັກຮັກສາທຸກປ່າສະຫງວນທີ່ໄດ້ຮັບຮອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງດຳລັດສະບັບນີ້, ຂະແໜງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ຕ້ອງຂຶ້ນທະບຽນ ແລະ ອອກໃບຢັ້ງຢືນທີ່ດິນປ່າສະຫງວນ.

ມາດຕາ 14. ການຫັນປ່ຽນປ່າສະຫງວນ

ໃນກໍລະນີຈຳເປັນ ມີການຫັນປ່ຽນປ່າສະຫງວນ ຫລືພື້ນທີ່ໃດໜຶ່ງ ຂອງປ່າສະຫງວນ ເພື່ອໄປຮັບໃຊ້ເປົ້າໝາຍອື່ນ ທີ່ເຫັນວ່າມີຜົນປະໂຫຍດສູງກວ່າ ໃຫ້ປະຕິບັດ ດັ່ງນີ້:

1. ການຫັນປ່ຽນປ່າສະຫງວນແຫ່ງຊາດ ແລະ ປ່າສະຫງວນລະດັບແຂວງ ຕ້ອງໄດ້ຮັບຮອງຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ;
2. ການຫັນປ່ຽນປ່າສະຫງວນລະດັບເມືອງ, ເທດສະບານ ຕ້ອງໄດ້ຮັບຮອງຈາກລັດຖະບານ ຕາມການສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍການເຫັນດີເປັນເອກະພາບກັບ ເຈົ້າແຂວງ ທີ່ກ່ຽວຂ້ອງ;
3. ການຫັນປ່ຽນປ່າສະຫງວນ ລະດັບບ້ານ ຕ້ອງໄດ້ຮັບຮອງຈາກອົງການປົກຄອງແຂວງ, ນະຄອນ ຕາມການສະເໜີຂອງພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ໂດຍການເຫັນດີເປັນເອກະພາບກັບເຈົ້າເມືອງທີ່ກ່ຽວຂ້ອງ.

ຜູ້ທີ່ໄດ້ຮັບອະນຸຍາດຫັນປ່ຽນປ່າສະຫງວນ ຕ້ອງໄດ້ປະຕິບັດພັນທະ ແລະ ຄ່າທຳນຽມຕ່າງໆ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 4
## ວຽກງານປ່າສະຫງວນ

ມາດຕາ 15. ວຽກງານປ່າສະຫງວນ

ວຽກງານປ່າສະຫງວນ ປະກອບດ້ວຍ: ການສຳຫລວດ, ການວາງແຜນຈັດສັນ ແລະນຳໃຊ້ປ່າສະຫງວນ, ການປັກຫຼັກໝາຍ ແລະຕິດປ້າຍຂອບເຂດ, ການກວດກາລາດຕະເວນ, ການຟື້ນຟູປ່າສະຫງວນ, ການປ້ອງກັນໄຟໄໝ້ລາມປ່າ, ການສຶກສາຄົ້ນຄວ້າ, ການໂຄສະນາເຜີຍແຜ່ ແລະການທ່ອງທ່ຽວແບບອະນຸລັກ.

ມາດຕາ 16. ການສຳຫລວດປ່າສະຫງວນ

ອົງການຄຸ້ມຄອງປ່າສະຫງວນ ເປັນເຈົ້າການໃນການດຳເນີນການສຳຫລວດປ່າສະຫງວນ ເພື່ອເກັບກຳຂໍ້ມູນ ສະພາບປ່າໄມ້, ຄວາມປົກຫຸ້ມປ່າໄມ້, ຊະນິດພັນໄມ້, ບໍລິມາດໄມ້, ມວນສານທາດກາກບ້ອນປ່າໄມ້, ໄມ້ສືບພັນ, ເຄື່ອງປ່າຂອງດົງ, ຊີວະນາໆພັນ, ການນຳໃຊ້ທີ່ດິນ, ແຫລ່ງນ້ຳ, ສະພາບເສດຖະກິດ-ສັງຄົມ, ຮ່ອງຮອຍປະຫວັດສາດ, ວັດທະນະທຳ, ຂອບເຂດ, ການຕິດປ້າຍ, ການປັກຫລັກໝາຍ, ການແບ່ງເຂດຄຸ້ມຄອງໃນປ່າສະຫງວນ ແລະອື່ນໆ.

ມາດຕາ 17. ການວາງແຜນຈັດສັນ ແລະນຳໃຊ້ປ່າສະຫງວນ

ອົງການຄຸ້ມຄອງປ່າສະຫງວນ ເປັນຜູ້ຄົ້ນຄວ້າ ແລະ ວາງແຜນຈັດສັນຄຸ້ມຄອງ ແລະນຳໃຊ້ລະອຽດ ໂດຍອີງໃສ່ຂໍ້ມູນທີ່ເກັບກຳໄດ້ຈາກການສຳຫລວດຕົວຈິງ ພ້ອມທັງຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຊຶ່ງມີການສົມ

ທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍໃຫ້ມີການເຂົ້າຮ່ວມ ຂອງປະຊາຊົນ ທີ່ຕັ້ງພູມລຳເນົາຢູ່ໃນ ແລະ ອ້ອມຂ້າງເຂດປ່າສະຫງວນ.

ການວາງແຜນຈັດສັນ ໃຫ້ດຳເນີນຕາມຫລັກການພື້ນຕໍ່ ດັ່ງນີ້:

1. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ຍຸດທະສາດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຍຸດທະສາດປ່າໄມ້ ແລະ ແຜນການນຳໃຊ້ທີ່ດິນປ່າໄມ້;
2. ຮັບປະກັນຄວາມເປັນເອກະພາບໃນການວາງແຜນປົກປັກຮັກສາ ແລະ ພັດທະນາປ່າສະຫງວນແບບຍືນຍົງ;
3. ຮັບປະກັນ ການນຳໃຊ້ຜະລິດຕະພັນປ່າໄມ້ແບບຍືນຍົງ, ບໍ່ບົກແຫ້ງ, ບໍ່ກະທົບເຖິງໂຄງສ້າງຂອງປ່າໄມ້, ຮັບປະກັນການສືບພັນໄມ້ ແລະ ເຄື່ອງປ່າຂອງດົງ ຕາມທຳມະຊາດ;
4. ຮັບປະກັນ ການປົກປັກຮັກສາແຫລ່ງນ້ຳ, ຊີວະນາໆພັນໃຫ້ອຸດົມສົມບູນ ລວມທັງການປົກປັກຮັກສາສິ່ງແວດລ້ອມ.

### ມາດຕາ 18. ການປັກຫຼັກໝາຍ ແລະຕິດປ້າຍຂອບເຂດ

ອົງການຄຸ້ມຄອງປ່າສະຫງວນ ເປັນເຈົ້າການ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ, ກຸ່ມບ້ານ ແລະ ບ້ານ ດຳເນີນການປັກຫຼັກໝາຍ ແລະຕິດປ້າຍຂອບເຂດປ່າສະຫງວນຕາມຈຸດທີ່ມີຄວາມຫລໍ່ແຫລມ ຕໍ່ການບຸກລຸກ ແລະ ບ່ອນທີ່ມີຊຸມຊົນອາໃສຢູ່. ສຳລັບຂະໜາດ, ປະເພດຫລັກໝາຍ ແລະ ປ້າຍແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 19. ການກວດກາລາດຕະເວນ

ອົງການຄຸ້ມຄອງປ່າສະຫງວນ ເປັນເຈົ້າການ ໃນການປະສານສົມທົບກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງແລະອົງການປົກຄອງທ້ອງຖິ່ນ, ກຸ່ມບ້ານ ແລະບ້ານ ຈັດຕັ້ງທີມງານດຳເນີນການກວດກາ ໂດຍສ້າງຕັ້ງຈຸດກວດກາຕາມຈຸດຫລໍ່ແຫລມ ແລະ ເສັ້ນທາງເຂົ້າ-ອອກ ປ່າສະຫງວນ ແລະ ກວດກາລາດຕະເວນ ຢູ່ພາຍໃນ ແລະ ອ້ອມຂ້າງເຂດ ປ່າສະຫງວນຢ່າງເປັນປົກກະຕິ ແລະ ແບບກະທັນຫັນ ໃນກໍລະນີມີເຫດການ ເກີດຂຶ້ນ ເພື່ອສະກັດກັ້ນ ການບຸກລຸກທຳລາຍປ່າສະຫງວນ ເຊັ່ນ: ການຖາງປ່າເຮັດໄຮ່, ການລັກລອບຕັດໄມ້ທຳລາຍປ່າ, ການບຸກເບີກເນື້ອທີ່ດິນປ່າສະຫງວນ, ການລ່າ, ການຄ້າ-ຂາຍສັດປ່າ, ເຄື່ອງປ່າຂອງດົງ ແລະ ກິດຈະກຳອື່ນໆ ທີ່ລະເມີດລະບຽບກົດໝາຍ.

### ມາດຕາ 20. ການຟື້ນຟູປ່າສະຫງວນ

ອົງການຄຸ້ມຄອງປ່າສະຫງວນ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ກຸ່ມບ້ານ ແລະ ບ້ານ ຈັດຕັ້ງປະຕິບັດ ການຟື້ນຟູປ່າສະຫງວນ ຕາມແຜນຈັດສັນ ແລະ ແຜນການຟື້ນຟູປ່າໄມ້ແຕ່ລະໄລຍະ ໂດຍການນຳໃຊ້ ມາດຕະຖານເຕັກນິກວິຊາການທີ່ເໝາະສົມ ໃນແຕ່ລະທ້ອງຖິ່ນ ເພື່ອປັບປຸງ ລະບົບນິເວດທຳມະຊາດ ສິ່ງແວດລ້ອມ, ຊີວະນາໆພັນ, ສັດນ້ຳ ແລະ ສັດປ່າ ໃຫ້ມີຄວາມອຸດົມສົມບູນ ຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ອາໃສຢູ່ໃນ ແລະອ້ອມຂ້າງ ປ່າສະຫງວນ.

ມາດຕາ 21. ການປ້ອງກັນໄຟໄໝ້ລາມປ່າ

ອົງການຄຸ້ມຄອງປ່າສະຫງວນ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ, ກຸ່ມບ້ານ ແລະ ບ້ານ ວາງມາດຕະການປ້ອງກັນໄຟໄໝ້ປ່າ ໂດຍການສ້າງໃຫ້ມີປ້ອມຍາມໄຟໄໝ້ປ່າ ຕາມຈຸດທີ່ມີຄວາມສ່ຽງ, ສ້າງ ແລະຈັດຕັ້ງປະຕິບັດແຜນການ ສະກັດກັ້ນ ແລະ ຕ້ານໄຟໄໝ້ລາມປ່າ.

ມາດຕາ 22. ການສຶກສາຄົ້ນຄວ້າ

ລັດ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດຳເນີນການສຶກສາ, ຄົ້ນຄວ້າ, ວິໄຈທາງດ້ານວິທະຍາສາດ ເຊັ່ນ : ແມງໄມ້, ພັນພືດ, ພັນສັດນ້ຳ, ສັດປ່າທີ່ຫາຍາກ, ທໍລະນີສາດ, ຮ່ອງຮອຍປະຫວັດສາດ, ວັດທະນະທຳ, ມວນສານກາກບ້ອນປ່າໄມ້ ແລະ ອື່ນໆ. ໃນເຂດທີ່ກຳນົດໃຫ້, ຊຶ່ງຜູ້ໄດ້ຮັບອະນຸຍາດຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ລາຍງານຜົນການສຶກສາຄົ້ນຄວ້າເປັນລາຍລັກອັກສອນໃຫ້ອົງການຄຸ້ມຄອງປ່າສະຫງວນ ແຕ່ລະຂັ້ນ ພາຍໃນ ຫົກສິບວັນ ຫລັງຈາກການສຶກສາຄົ້ນຄວ້າສຳເລັດ.

ມາດຕາ 23. ການໂຄສະນາເຜີຍແຜ່

ອົງການຄຸ້ມຄອງປ່າສະຫງວນ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ກຸ່ມບ້ານ ແລະ ບ້ານ ຈັດຕັ້ງການໂຄສະນາເຜີຍແຜ່ ດ້ວຍຮູບການຕ່າງໆ ຢ່າງເປັນປົກກະຕິ ແລະຕໍ່ເນື່ອງ ເພື່ອປູກຈິດສຳນຶກກ່ຽວກັບວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ປ່າສະຫງວນ ໃຫ້ແກ່ປະຊາຊົນ, ກຸ່ມຄົນ ແລະ ການຈັດຕັ້ງ ຕາມຂອບເຂດສິດ ແລະໜ້າທີ່ຂອງຕົນ.

ມາດຕາ 24. ການທ່ອງທ່ຽວແບບອະນຸລັກ

ລັດອະນຸຍາດໃຫ້ນຳໃຊ້ພື້ນທີ່ປ່າສະຫງວນບ່ອນທີ່ມີທ່າແຮງ ແລະ ເງື່ອນໄຂເປັນແຫລ່ງທ່ອງທ່ຽວທຳມະຊາດ ເພື່ອພັດທະນາເປັນສະຖານທີ່ທ່ອງທ່ຽວແບບອະນຸລັກ ເຊັ່ນ : ສະຖານທີ່ພັກຜ່ອນ, ພັກແຮມ ແລະ ອື່ນໆ ຕາມແຜນຈັດສັນ ເພື່ອການບໍລິການສັງຄົມ ໂດຍການພັດທະນາດັ່ງກ່າວ ຕ້ອງຮັກສາສະພາບຄວາມເປັນ ທຳມະຊາດ ແລະ ບໍ່ສົ່ງຜົນກະທົບຮ້າຍແຮງຕໍ່ປ່າສະຫງວນ ແລະ ທີ່ດິນປ່າສະຫງວນ.

ລັດສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ລົງທຶນພັດທະນາ ປ່າສະຫງວນບ່ອນທີ່ມີທ່າແຮງ ດ້ວຍຮູບການໃຫ້ເຊົ່າ ຫລືສຳປະທານພື້ນທີ່ປ່າສະຫງວນ ເພື່ອພັດທະນາເປັນສະຖານທີ່ທ່ອງທ່ຽວແບບອະນຸລັກ. ຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດພັນທະໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

# ໝວດທີ 5
## ການນຳໃຊ້ປ່າສະຫງວນ

### ມາດຕາ 25. ການນຳໃຊ້ປ່າສະຫງວນ

ລັດອະນຸຍາດ ໃຫ້ນຳໃຊ້ປ່າສະຫງວນ ສະເພາະແຕ່ເຂດທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງນຳໃຊ້ໃຫ້ຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຮັບປະກັນບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້, ຄຸນນະພາບຂອງດິນ, ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ.

ການນຳໃຊ້ປ່າສະຫງວນ ໄດ້ຈັດແບ່ງອອກເປັນ ສາມປະເພດ ດັ່ງນີ້:

1. ການນຳໃຊ້ເພື່ອສາທາລະນະປະໂຫຍດ;
2. ການນຳໃຊ້ເພື່ອຄອບຄົວ;
3. ການນຳໃຊ້ເພື່ອທຸລະກິດ.

### ມາດຕາ 26. ການນຳໃຊ້ເພື່ອສາທາລະນະປະໂຫຍດ

ການນຳໃຊ້ປ່າສະຫງວນ ເພື່ອສາທາລະນະປະໂຫຍດແມ່ນການນຳໃຊ້ເຂົ້າໃນການສຶກສາຄົ້ນຄວ້າທົດລອງ, ເປັນສະຖານທີ່ພັກຜ່ອນ, ທ່ອງທ່ຽວ, ຢາປົວພະຍາດ; ປົກປັກຮັກສາແຫລ່ງນ້ຳ, ຊີວະນາໆພັນ, ສິ່ງແວດລ້ອມທຳມະຊາດ, ປະຫວັດສາດ ແລະ ແຫລ່ງວັດທະນະທຳ ທີ່ບໍ່ເປັນທຸລະກິດ;

ການນຳໃຊ້ປ່າສະຫງວນ ເພື່ອສາທາລະນະປະໂຫຍດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມລະບຽບກົດໝາຍ.

### ມາດຕາ 27. ການນຳໃຊ້ເພື່ອຄອບຄົວ

ປະຊາຊົນທີ່ອາໃສຢູ່ໃນ ແລະ ອ້ອມຂ້າງປ່າສະຫງວນ ທີ່ປະກອບສ່ວນເຂົ້າໃນການປົກປັກຮັກສາ, ຟື້ນຟູປ່າໄມ້ ແລະ ເຄື່ອງປ່າຂອງດົງ ໃນເຂດປ່າສະຫງວນ ມີສິດນຳໃຊ້ປ່າໄມ້ ແລະ ຜະລິດຕະພົນປ່າໄມ້ໃນເຂດທີ່ໄດ້ກຳນົດ, ຈັດແບ່ງໃຫ້ ແລະ ຕາມແຜນຈັດສັນປ່າສະຫງວນ ແລະລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 28. ການນຳໃຊ້ເພື່ອທຸລະກິດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດນຳໃຊ້ ພື້ນທີ່ປ່າສະຫງວນ ທີ່ບໍ່ສ້າງຜົນກະທົບ ຕໍ່ລະບົບນິເວດທຳມະຊາດ ແລະ ສິ່ງແວດລ້ອມ ເປັນຕົ້ນ ພັດທະນາເປັນແຫລ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ, ປະຫວັດສາດ, ການຖ່າຍທຳຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນໆ ທີ່ໄດ້ກຳນົດໃນມາດຕາ 14 ຂອງດຳລັດສະບັບນີ້. ຊຶ່ງການນຳໃຊ້ດັ່ງກ່າວ ຕ້ອງໄດ້ຮັບອະນຸຍາດ ຈາກອົງການທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດ ຕາມແຜນຈັດສັນ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

ການນຳໃຊ້ປ່າສະຫງວນ ເພື່ອທຸລະກິດ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມລະບຽບກົດໝາຍ ພ້ອມນັ້ນ ຕ້ອງໄດ້ປະກອບທຶນເຂົ້າໃນການ ຄຸ້ມຄອງ ແລະປົກປັກຮັກສາປ່າສະຫງວນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 32 ຂອງດຳລັດສະບັບນີ້.

## ໝວດທີ 6
## ສິດ ແລະພັນທະຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າສະຫງວນ

### ມາດຕາ 29. ສິດຂອງຜູ້ໄດ້ຮັບອະນຸຍາດໃຫ້ນຳໃຊ້ປ່າສະຫງວນ

ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ນຳໃຊ້ປ່າສະຫງວນ ແລະ ທີ່ດິນປ່າສະຫງວນ ມີສິດ ດັ່ງນີ້:

1. ປົກປັກຮັກສາປ່າສະຫງວນ ຕາມແຜນຈັດສັນ ແລະ ລະບຽບກົດໝາຍ ກ່ຽວກັບປ່າສະຫງວນ;
2. ນຳໃຊ້ປ່າໄມ້, ຜະລິດຕະພັນປ່າໄມ້ ແລະ ທີ່ດິນປ່າໄມ້ໃນປ່າສະຫງວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26, 27 ແລະ 28 ຂອງດຳລັດສະບັບນີ້;
3. ໄດ້ຮັບໝາກຜົນ ຈາກການເຂົ້າຮ່ວມ ແລະເປັນເຈົ້າການ ໃນການຈັດຕັ້ງປະຕິບັດ ກິດຈະການປ່າສະຫງວນຕາມແຜນຈັດສັນ ແລະ ການໃຫ້ເຊົ່າ, ສຳປະທານ ຕາມລະບຽບກົດໝາຍ.

ສຳລັບການຈັດຕັ້ງຂອງລັດ ແມ່ນມີສິດຄຸ້ມຄອງ, ປົກປັກຮັກສາ ແລະນຳໃຊ້ປ່າໄມ້ທຳມະຊາດຕາມລະບຽບກົດໝາຍ ແຕ່ບໍ່ມີສິດໂອນ, ສືບທອດ, ເຊົ່າ ຫລືສຳປະທານ ເວັ້ນເສັຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ ທີ່ກ່ຽວຂ້ອງ.

### ມາດຕາ 30. ພັນທະຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າສະຫງວນ

ຜູ້ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ປ່າສະຫງວນ ມີພັນທະ ດັ່ງນີ້:

1. ນຳໃຊ້ປ່າສະຫງວນ ໃຫ້ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບແຜນຈັດສັນປ່າສະຫງວນ ແລະ ລະບຽບກົດໝາຍ ທີ່ກ່ຽວຂ້ອງ;
2. ຟື້ນຟູ, ປົກປັກຮັກສາ ແລະພັດທະນາ ປ່າສະຫງວນ ໃຫ້ອຸດົມສົມບູນ ແລະຍືນຍົງ;
3. ປົກປັກຮັກສາສິ່ງແວດລ້ອມ, ຍອດນ້ຳ, ແຫລ່ງນ້ຳ, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າໃນເຂດປ່າສະຫງວນ;
4. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບຂະແໜງການທີ່ກ່ຽວຂ້ອງ;
5. ເປັນເຈົ້າການ, ເຂົ້າຮ່ວມ ຫລືປະກອບສ່ວນ ໃນການປ້ອງກັນ ແລະ ສະກັດກັ້ນ ການທຳລາຍປ່າໄຟໄໝ້ລາມປ່າ, ການລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະສັດປ່າ ໃນເຂດປ່າສະຫງວນ;
6. ຜູ້ປະກອບກິດຈະການໃນເຂດປ່າສະຫງວນ ຕ້ອງໄດ້ເສັຍພັນທະ ແລະ ຄ່າທຳນຽມອື່ນໆ ຕາມລະບຽບກົດໝາຍ ແລະ ຕ້ອງໄດ້ປະກອບທຶນເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ;

7. ຜູ້ປະກອບກິດຈະການ ທີ່ດຳເນີນກິດຈະການຢູ່ໃກ້ຄຽງກັບເຂດປ່າສະຫງວນ ທີ່ສົ່ງຜົນກະທົບທາງລົບຕໍ່ປ່າສະຫງວນ ຕ້ອງໄດ້ປະກອບທຶນເຂົ້າ ໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ ຕາມລະບຽບກົດໝາຍ;
8. ປະຕິບັດ ພັນທະອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 7
## ທຶນ ນຳໃຊ້ເຂົ້າໃນການຄຸ້ມຄອງ ແລະປົກປັກຮັກສາປ່າສະຫງວນ

### ມາດຕາ 31. ແຫລ່ງທຶນ

ທຶນ ທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ ໄດ້ມາຈາກແຫລ່ງທຶນ ຕົ້ນຕໍ ດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
3. ກອງທຶນປົກປັກຮັກສາ ສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫລືໂຄງການທີ່ດຳເນີນຢູ່ໃນເຂດປ່າສະຫງວນ ຫລື ພື້ນທີ່ໃກ້ຄຽງ ທີ່ສົ່ງຜົນກະທົບຕໍ່ປ່າສະຫງວນ;
5. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ.

### ມາດຕາ 32. ການປະກອບທຶນຂອງກິດຈະການ ຫລືໂຄງການໃນປ່າສະຫງວນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ດຳເນີນກິດຈະການ ຫລືໂຄງການ ໃນປ່າສະຫງວນ ຕ້ອງໄດ້ປະຕິບັດ ພັນທະຕາມທີ່ໄດ້ກຳນົດ ໃນມາດຕາ 14 ຂອງດຳລັດສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງແລ້ວ ຕ້ອງໄດ້ປະກອບທຶນ ເຂົ້າໃນການຄຸ້ມຄອງປົກປັກຮັກສາ ແລະ ພັດທະນາປ່າສະຫງວນ ດັ່ງນີ້:

1. ຜູ້ດຳເນີນໂຄງການ ເຂື່ອນໄຟຟ້າພະລັງນ້ຳ, ຂຸດຄົ້ນແຮ່ທາດ, ກໍ່ສ້າງເສັ້ນທາງ, ແລວສາຍສົ່ງໄຟ ຟ້າ ແລະໂຄງການພັດທະນາ ທີ່ມີການທັບປ່ຽນແບບຖາວອນ ຕ້ອງໄດ້ປະກອບທຶນເຂົ້າໃນການຟື້ນຟູປ່າ ແລະ ປູກຕົ້ນໄມ້ທົດ ແທນຄືນ ຕາມຈຳນວນເນື້ອທີ່ ຖືກກະທົບ ມູນຄ່າ ແປດຮ້ອຍ ໂດລາ ຕໍ່ ໜຶ່ງ ເຮັກຕາ;

   ນອກຈາກນັ້ນ, ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຕ້ອງໄດ້ປະກອບທຶນ ເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ ໃນຂອບເຂດອ່າງໂຕ່ງ ສອງໂດລາ ຕໍ່ ໜຶ່ງເຮັກຕາ ຕໍ່ປີ;

2. ຜູ້ປະກອບກິດຈະການ ດ້ານການທ່ອງທ່ຽວທຳມະຊາດ ໃນ ຫລືອ້ອມຂ້າງເຂດປ່າສະຫງວນ ຕ້ອງໄດ້ເສຍຄ່າພັນທະ ຕາມລະບຽບກົດໝາຍ ແລະ ປະກອບທຶນ ໜຶ່ງສ່ວນຮ້ອຍ (1%) ຂອງ ລາຍຮັບທັງໝົດ ຕໍ່ປີ;
3. ຜູ້ປະກອບກິດຈະການ ຖ່າຍທຳຮູບເງົາ, ສາລະຄະດີ ແລະ ອື່ນໆ ໃນເຂດປ່າສະຫງວນທີ່ມີ ລັກສະນະທຸລະກິດ ຕ້ອງປະກອບທຶນ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າໂຄງການ;
4. ຜູ້ດຳເນີນການສຶກສາຄົ້ນຄວ້າທາງວິທະຍາສາດ ທີ່ບໍ່ມີລັກສະນະທຸລະກິດ ໃຫ້ເສຍຄ່າທຳນຽມ ຕາມລະບຽບການ.

## ໝວດທີ 8
## ການຄຸ້ມຄອງປ່າສະຫງວນ

### ມາດຕາ 33. ການຄຸ້ມຄອງປ່າສະຫງວນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນເປັນເຈົ້າການ ຈັດຕັ້ງໜ່ວຍງານສະເພາະ ເພື່ອຮັບຜິດຊອບຄຸ້ມຄອງປ່າສະຫງວນ ຢູ່ໃນແຕ່ລະແຫ່ງ. ສຳລັບປ່າສະຫງວນແຫ່ງຊາດແຕ່ລະແຫ່ງ ຕ້ອງປະກອບພະນັກງານວິຊາການ ຢ່າງໜ້ອຍ ຊາວຄົນ, ຫ້ອງການພາກສະໜາມ, ຫໍຄອຍ ພ້ອມທັງປະກອບ ເຄື່ອງມື, ອຸປະກອນ, ພາຫະນະ, ອາວຸດ ແລະ ຈັດສັນງົບປະມານຮັບໃຊ້ການເຄື່ອນໄຫວ ໂດຍຖືເອົາກຳລັງປະຊາຊົນເປັນຕົ້ນຕໍໃນການດຳເນີນການຈັດຕັ້ງປະຕິບັດວຽກງານ.

### ມາດຕາ 34. ການແບ່ງຂັ້ນຄຸ້ມຄອງປ່າສະຫງວນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ ໃນທົ່ວປະເທດ ໂດຍມອບໃຫ້ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ (ແຂວງ, ເມືອງ, ບ້ານ) ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດແຕ່ລະແຫ່ງ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການ ໃນການຄຸ້ມຄອງປ່າສະຫງວນລະດັບແຂວງ, ນະຄອນ.

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ເທດສະບານ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການ ໃນການຄຸ້ມຄອງປ່າສະຫງວນລະດັບເມືອງ.

ໜ່ວຍງານປ່າໄມ້ບ້ານ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງຕ່າງໆພາຍໃນບ້ານ, ກຸ່ມບ້ານ ເປັນເຈົ້າການໃນການຄຸ້ມຄອງປ່າສະຫງວນ ລະດັບບ້ານ.

ມາດຕາ 35. ອົງການຄຸ້ມຄອງປ່າສະຫງວນ

ລັດຖະບານ ເປັນຜູ້ຄຸ້ມຄອງປ່າສະຫງວນ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ອົງການປົກຄອງທ້ອງຖິ່ນ ແລະພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງປ່າສະຫງວນ ປະກອບດ້ວຍ:

- ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ;
- ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ;
- ໜ່ວຍງານ ປ່າໄມ້ບ້ານ.

ມາດຕາ 36. ສິດ ແລະ ໜ້າທີ່ຂອງກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ

ໃນການຄຸ້ມຄອງປ່າສະຫງວນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນຍຸດທະສາດ, ແຜນນະໂຍບາຍ ແລະລະບຽບກົດໝາຍກ່ຽວກັບປ່າສະຫງວນ ເພື່ອສະເໜີລັດຖະບານພິຈາລະນາ;
2. ໂຄສະນາເຜີຍແຜ່ ລະບຽບກົດໝາຍກ່ຽວກັບປ່າສະຫງວນ ໃນຂອບເຂດທົ່ວປະເທດ;
3. ຄົ້ນຄວ້າ ແລະ ສະເໜີລັດຖະບານພິຈາລະນາກຳນົດເຂດພື້ນທີ່ໃດໜຶ່ງ ເປັນປ່າສະຫງວນແຫ່ງຊາດ;
4. ຄົ້ນຄວ້າ ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳກ່ຽວກັບປ່າສະຫງວນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;
5. ຄົ້ນຄວ້າ ສ້າງແຜນຈັດສັນປ່າສະຫງວນແຫ່ງຊາດ ໂດຍມີການປະສານສົມທົບກັບພາກສ່ວນ ອື່ນທີ່ກ່ຽວຂ້ອງ;
6. ຊີ້ນຳ, ຕິດຕາມ ແລະກວດກາ ການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບປ່າສະຫງວນ ໃນຂອບເຂດທົ່ວປະເທດ;
7. ກວດກາ ແລະ ປະກອບສຳນວນຄະດີ ຜູ້ລະເມີດລະບຽບກົດໝາຍກ່ຽວກັບປ່າສະຫງວນ ສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຕໍ່ສານ ຕາມຂະບວນການຍຸຕິທຳ;
8. ສຳຫລວດ ແລະ ສ້າງຖານຂໍ້ມູນຂ່າວສານ ກ່ຽວກັບປ່າສະຫງວນ ພ້ອມທັງ ບຳລຸງ ແລະ ຍົກລະດັບວິຊາການ ກ່ຽວກັບປ່າສະຫງວນ ໃຫ້ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;
9. ປະສານສົມທົບ ກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າສະຫງວນ;
10. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ່າສະຫງວນ ຕາມການມອບໝາຍ;

11. ສະຫລຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປ່າສະຫງວນ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 37. ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ, ນະຄອນ

ໃນການຄຸ້ມຄອງປ່າສະຫງວນ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນນະໂຍບາຍ ແລະລະບຽບກົດໝາຍ ກ່ຽວກັບປ່າສະຫງວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາເຜີຍແຜ່ລະບຽບກົດໝາຍກ່ຽວກັບປ່າສະຫງວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຄົ້ນຄວ້າ ແລະ ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນ ພິຈາລະນາ ກຳນົດເຂດພື້ນທີ່ໃດໜຶ່ງ ເປັນປ່າສະຫງວນລະດັບແຂວງ;
4. ຄົ້ນຄວ້າ ແລະ ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນ ພິຈາລະນາຮັບຮອງເອົາແຜນຈັດສັນປ່າສະຫງວນລະດັບແຂວງ ໂດຍມີການປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ;
5. ຊີ້ນຳ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານປ່າສະຫງວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ກວດກາ ແລະ ປະກອບສຳນວນຄະດີ ຜູ່ລະເມີດລະບຽບກົດໝາຍກ່ຽວກັບປ່າສະຫງວນ ສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຕໍ່ສານ ຕາມຂະບວນການຍຸຕິທຳ;
7. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບການດຳເນີນກິດຈະການ ໃນເຂດປ່າສະຫງວນແຫ່ງຊາດ ເພື່ອສະເໜີຕໍ່ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມພິຈາລະນາ;
8. ສຳຫລວດ, ເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນຂ່າວສານ ກ່ຽວກັບປ່າສະຫງວນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
9. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະປົກປັກຮັກສາປ່າສະຫງວນ;
10. ສະຫລຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 38. ສິດ ແລະໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງ

ໃນການຄຸ້ມຄອງປ່າສະຫງວນ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະໂຄງການກ່ຽວກັບປ່າສະຫງວນໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາເຜີຍແຜ່ ລະບຽບກົດໝາຍ ກ່ຽວກັບປ່າສະຫງວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຄົ້ນຄວ້າ ແລະ ສະເໜີເຈົ້າເມືອງ ພິຈາລະນາກຳນົດເຂດພື້ນທີ່ໃດໜຶ່ງ ເປັນປ່າສະຫງວນ ລະດັບເມືອງ;
4. ຄົ້ນຄວ້າ ແລະ ສະເໜີເຈົ້າເມືອງ ພິຈາລະນາຮັບຮອງເອົາແຜນຈັດສັນປ່າສະຫງວນ ລະດັບ ເມືອງ ໂດຍມີການປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ;
5. ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານປ່າສະຫງວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ກວດກາ ແລະ ປະກອບສຳນວນຄະດີ ຜູ້ລະເມີດລະບຽບກົດໝາຍກ່ຽວກັບປ່າສະຫງວນ ສົ່ງໃຫ້ອົງການໄອຍະການປະຊາຊົນ ສົ່ງຟ້ອງຕໍ່ສານ ຕາມຂະບວນການຍຸຕິທຳ;
7. ສຳຫລວດ ແລະ ເກັບກຳຂໍ້ມູນ ກ່ຽວກັບປ່າສະຫງວນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
8. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ;
9. ສະຫລຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ຂອງແຂວງ, ນະຄອນ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 39. ສິດ ແລະໜ້າທີ່ຂອງໜ່ວຍງານປ່າໄມ້ບ້ານ

ໃນການຄຸ້ມຄອງປ່າສະຫງວນ ໜ່ວຍງານປ່າໄມ້ບ້ານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີໃຫ້ອົງການປົກຄອງບ້ານ ອອກລະບຽບຄຸ້ມຄອງ ແລະ ນຳໃຊ້ປ່າສະຫງວນຂອງບ້ານຕົນ;
2. ໂຄສະນາສຶກສາອົບຮົມ ກ່ຽວກັບຄວາມສຳຄັນ ແລະ ຄຸນປະໂຫຍດຂອງປ່າສະຫງວນ ໃຫ້ປະຊາຊົນ ໃນບ້ານຂອງຕົນ;
3. ປະຕິບັດຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງ ແລະ ລະບຽບກົດໝາຍກ່ຽວກັບປ່າສະຫງວນ;
4. ຈັດຕັ້ງກຳລັງປະຊາຊົນ ຫລືອາສາສະໝັກ ໃຫ້ເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາປ່າສະຫງວນຂອງບ້ານ ແລະ ການປ້ອງກັນໄຟລາມປ່າ;
5. ຕິດຕາມ, ເກັບກຳສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ;
6. ເປັນເຈົ້າການ ຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການລະເມີດລະບຽບກົດໝາຍກ່ຽວກັບປ່າສະຫງວນ ເຊັ່ນ: ການລັກລອບເຄື່ອງປ່າຂອງດົງ, ຕັດໄມ້, ຈູດປ່າ ແລະລ່າສັດ;
7. ສະຫລຸບ ແລະ ລາຍງານການເຄື່ອນໄຫວວຽກງານ ກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 40. ການຈັດຕັ້ງປະຕິບັດ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ກະຊວງ, ອົງການທຽບເທົ່າກະຊວງ ແລະອົງການຈັດຕັ້ງຕ່າງໆ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

**ມາດຕາ 41. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ